**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພັກປະຊາຊົນປະຕິວັດລາວ

ຄະນະປະຈຳພັກແຂວງ ເລກທີ 059 / ຄປພ ວຈ

ລົງວັນທີ 01 ມີນາ 2023

# ມະຕິຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ

- **ອີງຕາມ** ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ, ສະບັບເລກທີ 68 / ສພຊ, ລົງວັນທີ 14 ທັນວາ 2015 ໃນ ພາກທີ III, ໝວດທີ 4, ມາດຕາ 20 ວ່າດ້ວຍ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- **ອີງຕາມ** ຄຳແນະນຳ ຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 201 /ຄອ ສພ, ລົງວັນທີ 14 ຕຸລາ 2022 ກ່ຽວກັບການປັບປຸງພາລະບົດບາດ ຂອງຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ນະຄອນ ໃນທົ່ວປະເທດ.
- **ອີງຕາມ** ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນສະເພາະໜ້າ ແລະ ຍາວນານ ຂອງຄະນະໂຄສະນາອົບຮົມ ແຂວງວຽງຈັນ.
- **ອີງຕາມ** ການນຳສະເໜີຂອງພະແນກພາຍໃນແຂວງວຽງຈັນ, ສະບັບເລກທີ 34 / ຄອຂຈ ລົງວັນທີ 18 ມັງກອນ 2023.

## ຄະນະປະຈຳພັກແຂວງ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ.**

ມະຕິຕົກລົງສະບັບນີ້ ໄດ້ກຳນົດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມແຂວງ ໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ໃຫ້ມີປະສິດທິພາບສູງ.

**ມາດຕາ 2: ທີ່ຕັ້ງ.**

ຄະນະໂຄສະນາອົບຮົມແຂວງ ຂຽນຊື່ຫຍໍ້ ດ້ວຍຕົວອັກສອນ (ຄອຣ.ຂຈ) ແມ່ນອົງການຈັດຕັ້ງໜຶ່ງຂອງ

ພັກ, ມີຖານະທຽບເທົ່າພະແນກການ ແລະ ອົງການຕ່າງໆ ຂັ້ນແຂວງ.

**ມາດຕາ 3: ພາລະບົດບາດ.**

ຄະນະໂຄສະນາອົບຮົມແຂວງ ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະປະຈຳພັກ ແລະ ຄະນະບໍລິຫານງານພັກແຂວງ ກ່ຽວກັບວຽກງານການເມືອງ-ແນວຄິດ, ວຽກງານບໍລິຫານ, ວຽກງານໂຄສະນາ, ວຽກງານອົບຮົມ, ວຽກງານສັງລວມ ແລະ ຂໍ້ມູນຂ່າວສານ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 4: ໜ້າທີ່.**

1. ຈັດຕັ້ງເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ບັນດາມະຕິກອງປະຊຸມໃຫຍ່ຂອງພັກ, ມະຕິ, ຄຳສັ່ງຕ່າງໆ ຂອງສູນກາງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ ຖະບານ, ຂອງແຂວງ ໃຫ້ແກ່ພະນັກງານ, ສະມາຊິກພັກ, ທະຫານ, ຕຳຫຼວດ, ຊັ້ນຄົນປັນຍາຊົນ, ນັກທຸລະ ກິດ, ພໍ່ຄ້າຊາວຂາຍ ແລະ ປະຊາຊົນບັນດາເຜົ່າ ໃນທົ່ວແຂວງ.

2. ຄົ້ນຄວ້າ ຫັນເອົາແນວທາງນະໂຍບາຍຂອງພັກ, ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ມາເປັນແຜນການ, ແຜນງານ, ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

3. ຄົ້ນຄວ້າຮ່າງແຜນຍຸດທະສາດ ກ່ຽວກັບວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາ, ວຽກງານອົບຮົມ, ວຽກງານສັງລວມ ແລະ ຂໍ້ມູນຂ່າວສານ ໄລຍະຍາວ ເພື່ອສະເໜີຄະນະປະຈຳພັກແຂວງ ພິຈາລະນາ.

4. ສ້າງແຜນການ, ໂຄງການລະອຽດ ໃນການບຳລຸງສ້າງຖັນແຖວພະນັກງານ ຜູ້ທີ່ເຮັດວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານເກັບກຳທາງສຽງສັງຄົມ, ນັກໂຄສະນາປາຖະກະຖາ ຂອງບັນດາຂະແໜງການອ້ອມຂ້າງແຂວງ ແລະ ຂັ້ນເມືອງ ພ້ອມທັງຈັດຕັ້ງຝຶກອົບຮົມ.

5. ຈັດຕັ້ງການໂຄສະນາປາຖະກະຖາ ໃນໂອກາດວັນສຳຄັນຂອງຊາດ, ຂອງພັກ, ຂອງທ່ານຜູ້ນຳ, ສະພາບການທີ່ພົ້ນເດັ່ນຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ພະນັກງານ, ສະມາຊິກພັກ, ຊັ້ນຄົນປັນຍາຊົນ ແລະ ປະຊາຊົນບັນດາເຜົ່າ ພາຍໃນແຂວງ.

6. ກຳແໜ້ນສະພາບແນວຄິດ ແລະ ເກັບກຳທາງສຽງສັງຄົມ ນຳເປົ້າໝາຍຕ່າງໆ ໃນສັງຄົມ ຕາມໜ້າທີ່, ຂອບເຂດສິດຂອງຕົນ ພ້ອມທັງຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ສະເໜີວິທີການແກ້ໄຂ ຕໍ່ຄະນະປະຈຳພັກແຂວງ ໃຫ້ທິດຊີ້ນຳໃນການແກ້ໄຂໃຫ້ຖືກຕ້ອງ ແລະ ທັນເວລາ.

7. ຄຸ້ມຄອງລະບົບໄອທີ, ເຕັກນິກ, ຂໍ້ມູນຂ່າວສານ, ເວບໄຊສ໌ ຂອງຄະນະໂຄສະນາອົບຮົມແຂວງ ເພື່ອຮັບໃຊ້ໜ້າທີ່ວຽກງານໃຫ້ວ່ອງໄວ ແລະ ທັນການ.

8. ຈັດຕັ້ງໂຄສະນາເຄື່ອນທີ່, ການໂຄສະນາຜ່ານສື່ ຕິດພັນກັບການແຈກຢາຍ ວາລະສານໂຄສະນາ ແລະ ວາລະສານອະລຸນໃໝ່ ເພື່ອເຄື່ອນໄຫວໂຄສະນາ-ນຳພາແນວຄິດປະຊາຊົນໃຫ້ໄດ້ຢ່າງກວ້າງຂວາງ, ທົ່ວເຖິງ.

9. ປະສານສົມທົບກັບບັນດາພະແນກການ, ອົງການ, ກົມກອງພາຍໃນແຂວງ ແລະ ຄະນະພັກເມືອງ, ຄະນະໂຄສະນາອົບຮົມເມືອງ ເພື່ອສຶກສາອົບຮົມວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາ, ວຽກ

ງານອົບຮົມ, ວຽກງານສັງລວມ ແລະ ຂໍ້ມູນຂ່າວສານ ໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ຢ່າງທົ່ວເຖິງ.

10. ສະຫຼຸບຕີລາຄາ ວຽກງານການເມືອງ-ແນວຄິດ, ຈັດຕັ້ງບຳລຸງ ແນະນຳດ້ານວິຊາການ, ສະໜອງເອກະສານທີ່ຈຳເປັນໃຫ້ພະແນກການ, ອົງການ, ກົມກອງພາຍໃນແຂວງ ແລະ ຄະນະໂຄສະນາອົບຮົມເມືອງ

11. ຂຶ້ນແຜນງົບປະມານ, ຄຸ້ມຄອງຊັບສິນ, ເຮັດວຽກງານບໍລິຫານ-ພິທີການ, ການຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ, ການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ແຜນບຳລຸງກໍ່ສ້າງພະນັກງານ, ແຜນກຳນົດຕຳ ແໜ່ງງານ, ການປະຕິບັດນະໂຍບາຍ, ການປະສານງານ, ພົວພັນ ແລະ ສະຫຼຸບວຽກງານຂອງຄະນະໂຄສະນາອົບຮົມແຂວງ ເປັນປົກກະຕິ.

12. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂຶ້ນແຜນຝຶກອົບຮົມເປົ້າໝາຍຕ່າງໆ ຕາມທິດຊີ້ນຳຂອງຄະນະປະຈຳພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ.

13. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະປະຈຳພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ.

**ມາດຕາ 5: ຂອບເຂດສິດ.**

1. ເຂົ້າຮ່ວມກອງປະຊຸມຄະນະບໍລິຫານພັກແຂວງ, ອົງການປົກຄອງແຂວງ, ກອງປະຊຸມຄະນະໂຄສະນາອົບຮົມສູນກາງພັກ, ກອງປະຊຸມອື່ນໆ ຕາມການຕົກລົງ ຂອງຄະນະປະຈຳພັກແຂວງ ແລະ ຕາມການເຊີນຂອງອົງການກ່ຽວຂ້ອງ, ປະກອບຄຳຄິດ ຄຳເຫັນທີ່ພົວພັນເຖິງວຽກງານການເມືອງ-ແນວຄິດ ແລະ ວຽກງານອື່ນໆ ຕາມຄວາມເປັນຈິງ.

2. ອອກຄຳແນະນຳ ແລະ ແຈ້ງການຕ່າງໆ ເຖິງຄະນະພັກຮາກຖານ, ໜ່ວຍພັກພະແນກການ-ອົງການຂອງແຂວງ ແລະ ຄະນະພັກເມືອງ ກ່ຽວກັບວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາ, ວຽກງານອົບຮົມ, ວຽກງານສັງລວມ ແລະ ຂໍ້ມູນຂ່າວສານ ຕາມຄວາມຮັບຜິດຊອບຂອງຕົນ.

3. ສະເໜີການປັບປຸງກົງຈັກການຈັດຕັ້ງ, ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ, ຍ້ອງຍໍ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຕາມລະບຽບຫຼັກການກຳນົດໄວ້.

4. ສະເໜີປັບປຸງ ຫຼື ລົບລ້າງມະຕິຕົກລົງ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນໆກ່ຽວກັບວຽກງານໂຄສະນາອົບຮົມທີ່ຂັດກັບແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ທີ່ບໍ່ສອດຄ່ອງກັບພາລະບົດບາດ ແລະ ສະພາບຄວາມເປັນຈິງຂອງວຽກງານ.

5. ເຊັນເອກະສານທາງການໄດ້ຕາມພາລະບົດບາດ, ໜ້າທີ່, ສິດ ແລະ ຄວາມຮັບຜິດຊອບຂອງຕົນທີ່ກຳນົດໄວ້.

6. ຈັດຕັ້ງປະຕິບັດງົບປະມານຂອງຂະແໜງການຕົນ ໃຫ້ຖືກຕ້ອງຕາມລະບຽບຫຼັກການ ແລະ ການນຳໃຊ້ພາຫະນະ, ວັດຖຸອຸປະກອນຕ່າງໆ ທີ່ພັກ-ລັດ ມອບໝາຍໃຫ້ມີປະສິດທິຜົນສູງ.

## ໝວດທີ III
## ກົງຈັກການຈັດຕັ້ງ ແລະ ບຸກຄະລາການ

**ມາດຕາ 6: ໂຄງປະກອບການຈັດຕັ້ງປະກອບມີ 4 ຂະແໜງ ຄື:**

1. ຂະແໜງບໍລິຫານ.

2. ຂະແໜງໂຄສະນາ.

3. ຂະແໜງອົບຮົມ.

4. ຂະແໜງສັງລວມ ແລະ ຂໍ້ມູນຂ່າວສານ.

**ມາດຕາ 7: ໂຄງປະກອບບຸກຄະລາກອນ.**

1. ຫົວໜ້າຄະນະໂຄສະນາອົບຮົມແຂວງ ມີ 1 ທ່ານ, ມີຄວາມຮັບຜິດຊອບຕໍ່ຄະນະບໍລິຫານງານພັກແຂວງ, ຄະນະປະຈຳພັກແຂວງ ກ່ຽວກັບວຽກງານການເມືອງ-ແນວຄິດ ແລະ ວຽກງານໂຄສະນາອົບຮົມ; ການຄຸ້ມຄອງພະນັກງານ ຕາມຄວາມຮັບຜິດຊອບ ແລະ ມີສິດໜ້າທີ່ຕາມພາລະບົດບາດທີ່ໄດ້ກຳນົດໄວ້, ໃນເວລາຕິດຂັດພາລະກິດ ຕ້ອງມອບໃຫ້ຮອງຫົວໜ້າຄະນະໂຄສະນາອົບຮົມສະຫາຍໃດໜຶ່ງ ເປັນຜູ້ຮັກສາການແທນ.

2. ມີຮອງຫົວໜ້າຄະນະໂຄສະນາອົບຮົມແຂວງ ຈຳນວນໜຶ່ງ ເປັນຜູ້ຊ່ວຍ ຫົວໜ້າຄະນະໂຄສະນາອົບຮົມ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າຄະນະໂຄສະນາອົບຮົມ, ມີຄວາມຮັບຜິດຊອບໂດຍກົງຕໍ່ຜົນສຳເລັດ, ຂໍ້ຂາດຕົກບົກຜ່ອງໃນວຽກງານທີ່ຕົນເອງຊີ້ນຳ ແລະ ເປັນຜູ້ຮັກສາການແທນໃນເວລາຫົວໜ້າຕິດຂັດ.

3. ມີຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

## ໝວດທີ IV
## ໜ້າທີ່ຂອງແຕ່ລະຂະແໜງ

**ມາດຕາ 8: ໜ້າທີ່ຂອງຂະແໜງບໍລິຫານ.**

1. ຄຸ້ມຄອງພະນັກງານ-ລັດຖະກອນ, ບັນຈຸຊັບຊ້ອນ, ຍົກຍ້າຍ, ຍ້ອງຍໍ, ເກັບກຳສະຖິຕິ, ຂຶ້ນແຜນກຳນົດສ້າງພະນັກງານນຳພາ-ຄຸ້ມຄອງ, ແຜນບຳລຸງ-ກໍ່ສ້າງພະນັກງານ, ແຜນກຳນົດຕຳແໜ່ງງານ, ປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ແລະ ການປະຕິບັດນະໂຍບາຍຕ່າງໆ ຕໍ່ພະນັກງານ-ລັດຖະກອນ ພາຍໃນຄວາມຮັບຜິດຊອບຂອງຕົນ.

2. ຂຶ້ນແຜນ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ ຄະນະ, ພະນັກງານ-ລັດຖະກອນ ໄດ້ເຄື່ອນໄຫວໜ້າທີ່ ຕາມພາລະບົດບາດຂອງຕົນ ແລະ ສະໜອງວັດຖຸອຸປະກອນ, ເຄື່ອງຮັບໃຊ້ຫ້ອງການ, ຄຸ້ມຄອງພາຫະນະຮັບໃຊ້, ວຽກງານຂາເຂົ້າ-ຂາອອກ, ວຽກງານສຳເນົາເອກະສານ, ການຈັດພິມເອກະສານ, ວຽກງານປະຊາສຳພັນ, ວຽກງານບໍລິຫານ, ບໍລິການປີ່ນອ້ອມວຽກງານວິຊາສະເພາະ, ການປ້ອງກັນເວນຍາມ, ຄວາມເປັນລະບຽບຮຽບຮ້ອຍ ພາຍໃນຄວາມຮັບຜິດຊອບຂອງຕົນ ແລະ ເຮັດວຽກງານອື່ນໆ ຕາມການມອບໝາຍ.

3. ຂຶ້ນແຜນງົບປະມານ, ຄຸ້ມຄອງນຳໃຊ້ງົບປະມານເຂົ້າໃນວຽກງານຕ່າງໆ; ສະຫຼຸບລາຍຮັບ-ລາຍຈ່າຍໃຫ້ພາກສ່ວນທີ່ກ່ຽວຂ້ອງ; ພ້ອມທັງຄິດໄລ່ເງິນເດືອນ, ເງິນອຸດໜຸນ, ລະບອບປະກັນສັງຄົມ, ການສະ ເ ໜີເລື່ອນຊັ້ນ-ຂັ້ນ ແລະ ນະໂຍບາຍຕ່າງໆ ທີ່ຖືກຕ້ອງຕາມລະບຽບຫຼັກການ.

4. ເປັນເຈົ້າການປະສານສົມທົບ ກັບບັນດາພະແນກການ, ອົງການ ໃນການເຄື່ອນໄຫວວຽກງານວິຊາສະເພາະຂອງຕົນ ແລະ ສະຫຼຸບໜ້າວຽກປະຈຳເດືອນ, ປະຈຳງວດ ລາຍງານໃຫ້ຄະນະ ແລະ ຂັ້ນເທິງ.

5. ເປັນໃຈກາງປະສານສົມທົບກັບ ພະແນກແຜນການ ແລະ ການລົງທຶນແຂວງ ໃນການຂຽນບົດສະເໜີໂຄງການລົງທຶນຂອງລັດ ແຕ່ລະຂະແໜງພາຍໃນຄະນະໂຄສະນາອົບຮົມແຂວງ.

6. ຂຶ້ນແຜນການ ແລະ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະຂອງຄະນະໂຄສະນາອົບຮົມແຂວງ.

7. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຄະນະໂຄສະນາອົບຮົມແຂວງ.

**ມາດຕາ 9: ໜ້າທີ່ຂອງຂະແໜງໂຄສະນາ.**

1. ຄົ້ນຄວ້ານຳສະເໜີ ຄະນະໂຄສະນາອົບຮົມແຂວງ ເພື່ອສະເໜີຄະນະປະຈຳພັກແຂວງ ພິຈາລະນາອອກນິຕິກຳຕ່າງໆ ເປັນຕົ້ນ ມະຕິຕົກລົງ, ຄຳສັ່ງແນະນຳ, ຄຳແນະນຳ, ແຈ້ງການແນະນຳ ເພື່ອເປັນບ່ອນອີງໃນການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລະບຽບການ, ກົດໝາຍຂອງລັດ, ມູນເຊື້ອຂອງຊາດ, ຂອງພັກ, ຂອງກອງທັບ, ຂອງທ່ານຜູ້ນຳ ຜົນສຳເລັດຂອງການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ-ລັດ ແລະ ຂອງທ້ອງຖິ່ນຕົນ, ສະພາບການທີ່ພົ້ນເດັ່ນທັງພາຍໃນ ແລະ ຕ່າງປະເທດ ໃນແຕ່ລະໄລຍະຕາມຄວາມ ເໝາະສົມ.

2. ເປັນເຈົ້າການປັບປຸງເນື້ອໃນເອກະສານປາຖະກະຖາ ໃຫ້ແທດເໝາະກັບແຕ່ລະເປົ້າໝາຍ ແລະ ສອດຄ່ອງກັບສະພາບຈຸດພິເສດ ຂອງທ້ອງຖິ່ນຕົນ.

3. ເປັນເຈົ້າການສ້າງແຜນການ, ໂຄງການລະອຽດ ຂອງຂະແໜງການຕົນ ເພື່ອຈັດຝຶກອົບຮົມຍົກລະດັບໃຫ້ພະນັກງານຜູ້ທີ່ເຮັດວຽກງານໂຄສະນາ ເປັນຕົ້ນ ວຽກປາຖະກະຖາ, ໂຄສະນາເຄື່ອນທີ່, ໂຄສະນາຜ່ານສື່ ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງ.

4. ຈັດຕັ້ງການໂຄສະນາເຄື່ອນທີ່ ແລະ ການໂຄສະນາຜ່ານສື່ຕ່າງໆ ເຊັ່ນ: ໂທລະພາບ, ວິທະຍຸ, ເວບໄຊສ໌, ເຟສບຸກ ແລະ ສື່ສິ່ງພິມຕ່າງໆ ໂດຍສົມທົບກັບພາກສ່ວນສື່ມວນຊົນຂອງແຂວງ, ກົມໂຄສະນາ ຂອງຄະນະໂຄສະນາອົບຮົມສູນກາງພັກ ເພື່ອນຳເອົາແນວທາງນະໂຍບາຍຂອງພັກ, ລະບຽບການ, ກົດໝາຍຂອງລັດ, ບັນດາມະຕິ, ຄຳສັ່ງ ແລະ ວຽກງານການເມືອງ-ແນວຄິດ ລົງໂຄສະນາເຜີຍແຜ່ຜ່ານສື່ ໃຫ້ທ່ວງທັນກັບສະພາບການ.

5. ຈັດຕັ້ງການໂຄສະນາເຄື່ອນທີ່ໃຫ້ປະຊາຊົນບັນດາເຜົ່າຢູ່ໃນຂົງເຂດຊຸມຊົນ, ເຂດຊານເມືອງ, ຈຸດສຸມພັດທະນາຂອງແຂວງ-ເມືອງ ແລະ ເຂດຫ່າງໄກສອກຫຼີກ ໃຫ້ຮັບຮູ້ເຂົ້າໃຈແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ເກັບກຳຂໍ້ມູນຄອບຄົວຕົວແບບໃນການຜະລິດເປັນສິນຄ້າ ເພື່ອສ້າງເປັນສາລະຄະດີພາຍໃນທ້ອງຖິ່ນຕົນ ເປັນແຕ່ລະໄລຍະ.

6. ຊຸກຍູ້, ຕິດຕາມການເຄື່ອນໄຫວວຽກງານ ໂຄສະນາປາຖະກະຖາ ຜ່ານສື່, ເຄື່ອນທີ່ ຢູ່ບັນດາພະແນກການ ແລະ ເມືອງ ເປັນປົກກະຕິ; ພ້ອມທັງສະຫຼຸບວຽກງານໃນຂະແໜງການຕົນ ເພື່ອລາຍງານໃຫ້ ຄະນະປະຈຳພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ.

7. ເປັນເຈົ້າການຄົ້ນຄວ້ານິຕິກຳຕ່າງໆ ຂອງຂັ້ນເທິງ ໃນແຕ່ລະໄລຍະ ສ້າງເປັນບົດຂ່າວ, ບົດຄວາມ, ສາລະໜ້າຮູ້ຕ່າງໆ ເພື່ອເຜີຍແຜ່ທາງລາຍການວິທະຍຸ ຄະນະໂຄສະນາອົບຮົມແຂວງ.

8. ຮັບຜິດຊອບຂຽນຂ່າວລົງເວບໄຊສ໌, ເຟສບຸກ ຂອງຄະນະໂຄສະນາອົບຮົມແຂວງ.

9. ຮັບຜິດຊອບວຽກງານວາລະສານອະລຸນໃໝ່ ແລະ ວາລະສານໂຄສະນາ.

**ມາດຕາ 10: ໜ້າທີ່ຂອງຂະແໜງອົບຮົມ.**

1. ເປັນເສນາທິການໂດຍກົງໃຫ້ແກ່ຄະນະປະຈຳພັກແຂວງ ໃນການຈັດຕັ້ງເຜີຍແຜ່ເຊື່ອມຊຶມ ພ້ອມທັງຕິດຕາມ, ສະຫຼຸບສັງລວມການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ ຂອງຂັ້ນເທິງ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ, ຂອງແຂວງ ໃນແຕ່ລະໄລຍະ ເພື່ອລາຍງານໃຫ້ຄະນະປະຈຳພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ.

2. ຄົ້ນຄວ້າກຳແໜ້ນ ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ ແຕ່ລະສະໄໝ ເພື່ອສ້າງເປັນເອກະສານອົບຮົມໃຫ້ເປົ້າໝາຍຕ່າງໆ ໃນທົ່ວແຂວງ.

3. ຝຶກອົບຮົມບຳລຸງຍົກລະດັບຄວາມຮູ້ທາງດ້ານທິດສະດີແນວທາງ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນຢູ່ຂັ້ນແຂວງ, ເມືອງ ຕາມເອກະສານອົບຮົມເປົ້າໝາຍຕ່າງໆ ຂອງກົມອົບຮົມ ຄະນະໂຄສະນາອົບຮົມສູນກາງພັກ.

4. ປະສານສົມທົບກັບພະແນກການ, ອົງການຕ່າງໆ ເພື່ອຈັດຕັ້ງຮຽນສະໜັບສະໜູນໃຫ້ມະຫາຊົນຜູ້ກ້າວໜ້າ ທີ່ຈະຂະຫຍາຍເຂົ້າພັກປະຊາຊົນປະຕິວັດລາວ.

5. ສົມທົບກັບພະແນກສຶກສາ ເພື່ອຕິດຕາມ, ກວດກາ ແລະ ຊຸກຍູ້ການຮຽນ-ການສອນ ວິຊາສຶກສາພົນລະເມືອງ, ວິຊາສັງຄົມການເມືອງ ຢູ່ບັນດາໂຮງຮຽນອະຊີວະສຶກສາ, ໂຮງຮຽນສາມັນຢູ່ຂັ້ນແຂວງ.

6. ສ້າງແຜນການເຄື່ອນໄຫວຂອງຂະແໜງການຕົນ ໃນການຈັດຕັ້ງຝຶກອົບຮົມເປົ້າໝາຍຕ່າງໆ; ພ້ອມທັງສະຫຼຸບຕີລາຄາ, ປະເມີນຜົນການຝຶກອົບຮົມໃນແຕ່ລະຄັ້ງ ເພື່ອລາຍງານຄະນະປະຈຳພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ.

**ມາດຕາ 11: ໜ້າທີ່ຂອງຂະແໜງສັງລວມ ແລະ ຂໍ້ມູນຂ່າວສານ.**

1. ສະຫຼຸບ ແລະ ວາງທິດທາງແຜນການວຽກງານໂຄສະນາອົບຮົມ, ວຽກງານການເມືອງ-ແນວຄິດ ປະຈຳເດືອນ, 3 ເດືອນ, 6 ເດືອນ, 1 ປີ ແລະ 5 ປີ ເພື່ອລາຍງານຄະນະປະຈຳພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ.

2. ຕິດຕາມ, ເກັບກຳສະພາບແນວຄິດ-ທາງສຽງສັງຄົມ ທີ່ພົ້ນເດັ່ນ ຂອງພະນັກງານ, ສະມາຊິກພັກ, ປະຊາຊົນບັນດາເຜົ່າ ການລາຍງານຂອງບັນດາພະແນກການ, ອົງການ, ກົມກອງ ແລະ ເມືອງ, ທີ່ເກີດຂຶ້ນໃນແຕ່ລະໄລຍະ, ພ້ອມທັງຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ສະເໜີມາດຕະການແກ້ໄຂ ເພື່ອສະຫຼຸບສັງລວມລາຍງານຄະນະປະຈຳພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ ໃຫ້ທັນກັບສະພາບການ.

3. ເປັນເຈົ້າການສ້າງແຜນການ, ໂຄງການລະອຽດຂອງຂະແໜງການຕົນ ເພື່ອຈັດຝຶກອົບຮົມຍົກລະດັບໃຫ້ພະນັກງານຜູ້ທີ່ເຮັດວຽກງານສັງລວມ, ເກັບກຳທາງສຽງສັງຄົມ ແລະ ວຽກງານໄອທີ.

4. ຕິດຕາມ, ກວດກາເຕັກນິກການເຊື່ອມຕໍ່ລະບົບເຄືອຂ່າຍເອເລັກໂຕຣນິກ ລະຫວ່າງ ຄະນະໂຄສະນາອົບຮົມສູນກາງພັກ ກັບຄະນະໂຄສະນາອົບຮົມແຂວງ ແລະ ເມືອງ.

5. ຈັດຕັ້ງບຳລຸງຍົກລະດັບວິຊາການໄອທີ ໃຫ້ພະນັກງານໂຄສະນາອົບຮົມ ຮູ້ນຳໃຊ້ເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ.

## ໝວດທີ V
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 12: ຫຼັກການ.**

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕີກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ, ປະຕິບັດລະບອບຫົວໜ້າດຽວ, ບົນພື້ນຖານການເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ຄວາມຮັບຜິດຊອບ ຂອງພະນັກງານ-ລັດຖະກອນ.

2. ການເຄື່ອນໄຫວວຽກງານຂອງຄະນະໂຄສະນາອົບຮົມແຂວງ ແລະ ພະນັກງານ-ລັດຖະກອນ ແມ່ນປະຕິບັດຕາມແນວທາງນະໂຍບາຍຂອງພັກ, ລະບຽບການ, ກົດໝາຍຂອງລັດ ເພື່ອຫັນເອົາວຽກງານການເມືອງ-ແນວຄິດ, ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງລັດ, ຂອງແຂວງ ມາຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ມາດຕາ 13: ແບບແຜນວິທີເຮັດວຽກ.**

1. ເຮັດວຽກຢ່າງມີແຜນການ, ແຜນງານ, ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ, ມີເປົ້າໝາຍໃນແຕ່ລະໄລຍະ, ມີການປະສານສົມທົບກັບສາຍຕັ້ງ-ສາຍຂວາງ, ບັນດາພະແນກການ, ອົງການ, ກົມກອງຂອງແຂວງ, ເມືອງ ຢ່າງກົມກຽວ ແລະ ແໜ້ນແຟ້ນ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

2. ເຮັດວຽກມີການຊຸກຍູ້, ຕິດຕາມ, ກວດກາ, ສະຫຼູບຕີລາຄາດ້ານດີ, ດ້ານອ່ອນ ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້ໃນແຕ່ລະໄລຍະ.

3. ປະຕິບັດລະບອບລາຍງານສ່ອງແສງປະຈໍາອາທິດ, ປະຈໍາເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ ເພື່ອລາຍງານສະພາບການຈັດຕັ້ງປະຕິບັດວຽກງານ ຂອງຄະນະໂຄສະນາອົບຮົມແຂວງ ໃຫ້ຄະນະປະຈໍາພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ ເປັນປົກກະຕິ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 14: ງົບປະມານ ແລະ ຕາປະທັບ.**

ຄະນະໂຄສະນາອົບຮົມແຂວງ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ ຕາມລະບຽບກົດໝາຍ ຄືກັບບັນດາພະແນກການ, ອົງການທຽບເທົ່າອື່ນໆ ຢູ່ຂັ້ນແຂວງ.

**ມາດຕາ 15: ການຈັດຕັ້ງປະຕິບັດ.**

ຄະນະບໍລິຫານງານພັກ, ອົງການປົກຄອງແຂວງ, ຄະນະໂຄສະນາອົບຮົມແຂວງ, ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ອົງການປົກຄອງເມືອງ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 16: ຜົນສັກສິດ.**

ມະຕິຕົກລົງສະບັບນີ້ ປ່ຽນແທນມະຕິຕົກລົງ ສະບັບເລກທີ 180/ຄປພ ຂຈ, ລົງວັນທີ 19 ພຶດສະພາ 2014 ມີຜົນສັກສິດ ແລະ ນໍາໃຊ້ໄດ້ນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

**ຄະນະປະຈໍາພັກແຂວງວຽງຈັນ.**

ຄໍາພັນ ສິດທິດໍາພາ